# <u>ການເອົາເຮືອນຢູ່ທີ່ຍຸຕິທັມ ສໍາຫຼັບຄົນພິການ</u>

## <u>Fair Housing For Persons With Disabilities</u>

ຂໍ້ມູນໃຫ້ໂດຍ

ຄະນະກັມມາທິການດູແລ ການເອົາເຮືອນຢູ່ທີ່ຍຸຕິທັມ ຂອງຣັດອໍຣິກອນ

(The Fair Housing Council of Oregon)

### ໂດຍທົ່ວໄປ

ບັນຍັດວ່າດ້ວຍການເອົາເຮືອນຢູ່ ທີ່ຍຸຕິທັມຂອງຣັຖບານ ແລະກົດໝາຍການເອົາເຮືອນຢູ່ ທີ່ຍຸຕິທັມຂອງຣັດອໍຣິກອນ ປົກປ້ອງຄົນພິການຈາກການຈໍາແນກໃນການເອົາເຮືອນຢູ່. ກົດໝາຍເຫຼົ່ານີ້ໃຊ້ໄດ້ ກັບຜູ້ໃຫ້ເຮືອນຢູ່ ທັງຂອງຣັຖແລະເອກຊົນ. ສ່ວນກົດໝາຍວ່າດ້ວຍສິດທິພົລເຮືອນອື່ນໆ ຂອງຣັຖບານກາງນັ້ນ ປົກປ້ອງຄົນພິການ ຈາກການຈໍາແນກ ທີ່ມີຢູ່ໃນໂຄງການເຮືອນຢູ່ ຊຶ່ງໄດ້ຮັບທຶນຂອງຣັຖ ແລະສຖານທີ່ໃນເຂດຄ້າຂາຍ ເຊັ່ນຫ້ອງການສໍາຫຼັບໃຫ້ເຊົ່າ.

### ຜູ້ໃດແດ່ທີ່ໄດ້ຮັບການປົກປ້ອງ ຕໍ່ການຈໍາແນກທີ່ອີງໃສ່ຄວາມພິການ?

ຄວາມພິການ ຕາມກົດໝາຍວ່າດ້ວຍການເອົາເຮືອນຢູ່ທີ່ຍຸຕິທັມນັ້ນ ໄດ້ມີການແປຄວາມໝາຍຢ່າງກວ້າງຂວາງ ເພື່ອໃຫ້ຮວບຮວມເອົາ ສພາບທາງກາຍຫຼືທາງໃຈໃດນຶ່ງ ຊຶ່ງເຮັດໃຫ້ກີດກັນ ຊຶ່ງສໍາຄັນຕໍ່ຊີວິດຢ່າງນຶ່ງພິການ ເຊັ່ນວ່າການເບິ່ງເຫັນ, ການຍ່າງ, ການໃຊ້ຄວາມຄິດ, ແລະຕໍ່ໆໄປ. ກົດໝາຍການເອົາເຮືອນຢູ່ທີ່ຍຸຕິທັມ ປົກປ້ອງຜູ້ຊອກຫາເຮືອນຢູ່, ສມາຊິກໃນຄອບຄົວ, ຫຼືແຂກເຊີນ. ກົດໝາຍຮວມເອົາຄວາມພິການໃນປະຈຸບັນ, ປວັດຄວາມພິການ, ຫຼືຄວາມເຊື່ອຖືທີ່ຜິດພາດວ່າ ບຸກຄົນຜູ້ນຶ່ງພິການ. ຜູ້ທີ່ໃຊ້ທາດເບື່ອເມົາທີ່ຜິດກົດໝາຍໃນເວລານີ້ ຈະບໍ່ໄດ້ຮັບການປົກປ້ອງ ແຕ່ວ່າ ຄົນຕິດເຫຼົ້າ ຫຼືຄົນທີ່ຢູ່ໃນການພັກຟື້ນ ຈາກການໃຊ້ຢາເສບຕິດ ຈະໄດ້ຮັບການປົກປ້ອງ.

### ການຈໍາແນກທາງກົງທີ່ຕ້ອງຫ້າມ

ການຈໍາແນກບ້ອນວ່າ ບຸກຄົນມີຄວາມພິການນັ້ນ ແມ່ນຜິດກົດໝາຍ ຢູ່ໃນການຕິດຕໍ່ດ້ານ ການເອົາເຮືອນຢູ່ທຸກໆປະເພດ ເຊັ່ນການເຊົ່າ, ການຊື້ຂາຍ, ການຢືມເງິນ, ແລະການໂຄສະນາ. ຕົວຢ່າງຂອງການຈໍາແນກທາງກົງ ເພາະຄວາມພິການຈະແມ່ນ ເຊັ່ນການປະຕິເສດໃຫ້ບຸກຄົນເຊົ່າເຮືອນ ບ້ອນວ່າຄົນຜູ້ນັ້ນ ມີອາການເຈັບປ່ວຍຮ້າຍແຮງແລະຊໍາເຮື້ອ ເຊັ່ນໂຣກປອດບໍ່ຍຶດຕົວ ແລະໂຣກຮ່າງກາຍຂາດພູມຕ້ານເຊື້ອໂຣກ (ໂຣກເອດ). ຈົ່ງຈໍາໄວ້ວ່າ ເຖິງຢ່າງໃດ ກົດໝາຍວ່າດ້ວຍ ການເອົາເຮືອນຢູ່ທີ່ຍຸຕິທັມ ກໍຍັງໃຊ້ໄດ້ກັບການກະທໍາ ທີ່ເປັນການຈໍາແນກ ***ເນື່ອງຈາກວ່າ*** ຄວາມພິການ ແລະບໍ່ແມ່ນບ້ອນສາເຫດທີ່ຖືກຕ້ອງຕາມກົດໝາຍ ເຊັ່ນເຄຣດິດບໍ່ດີ ຊຶ່ງນັ້ນແມ່ນໃຊ້ໄດ້ ກັບຜູ້ສມັກເຊົ່າທຸກໆຄົນ. ກົດໝາຍການເອົາເຮືອນຢູ່ທີ່ຍຸຕິທັມ ຍັງຫ້າມບໍ່ໃຫ້ເຈົ້າຂອງເຮືອນ ຖາມຄໍາຖາມກ່ຽວກັບຄວາມພິການ ເວັ້ນເສັຍແຕ່ໃນສພາວະການທີ່ມີຂອບເຂດຈໍາກັດ ເຊັ່ນວ່າ ຄວາມພິການແມ່ນເງື່ອນໄຂນຶ່ງ ເພື່ອໃຫ້ໄດ້ໂຄງການເອົາເຮືອນຢູ່.

### ຂໍ້ກໍານົດ "ການເຂົ້າໄປເຖິງ" ຕາມການເອົາເຮືອນຢູ່ທີ່ຍຸຕິທັມ

ຈຸດປະສົງຂອງການເອົາເຮືອນຢູ່ທີ່ຍຸຕິທັມ ແມ່ນເພື່ອຄວາມສເມີພາບ ໃນການມີໂອກາດໄດ້ເຮືອນຢູ່. ໃນກໍຣະນີຂອງຄົນພິການ ກົດໝາຍກໍານົດໃຫ້ຜູ້ໃຫ້ເຮືອນຢູ່ ປະຕິບັດຕາມຂັ້ນຕອນ ທີ່ເປັນການຢືນຢັນດ້ານການເພີ້ມການເຂົ້າເຖິງ ໃຫ້ຫຼາຍຂື້ນ. ຂໍ້ກໍານົດສາມຂໍ້ມີຄື:

FAIR HOUSING COUNCIL of Oregon

**1020 SW Taylor Street, Suite 700 Portland, Oregon 97205-2512**

ເລກໂທ: **503-223-8197** ຫຼື **1-800-424-3247** (ຄົນຫູໜວກ/TTY)

**Web: http://www.fhco.org** ທາງອີເມລ: **information@fhco.org**

ສາຍໂທດ່ວນສໍາຫຼັບການຮ້ອງຮຽນ ຂອງ **HUD: 1-800-877-0246**

- ສະຖານທີ່ໃຊ້ເລື້ອຍໆໃຫ້ເປັນບ່ອນເຂົ້າໄປເຖິງໄດ້ ແລະຫ້ອງຊັ້ນລ່າງຂອງອາຄານ "ພ້ອມທີ່ຈະດັດແປງໄດ້" **(readily adaptable)** ສຳຫຼັບຫ້ອງແຖວສ່ວນຫຼາຍ ທີ່ມີຫຼາຍໆຫ້ອງ ຊຶ່ງສ້າງແຕ່ປີ ພ.ສ. **1991** ເປັນຕົ້ນມາ. ກົດໝາຍບັງກຳນົດໃຫ້ມີ ທາງຂ້າງນອກເຂົ້າມາເຖິງອາຄານ ແລະຫ້ອງຊັ້ນລ່າງ ແລະບ່ອນທີ່ໃຊ້ເລື້ອຍໆ ເຊັ່ນຫ້ອງນັ່ງຫຼິ້ນ.

- **ການດັດແປງຮູບຮ່າງເພື່ອເພີ່ມການເຂົ້າໄປເຖິງ.** ເຈົ້າຂອງເຮືອນຕ້ອງອະນຸຍາດໃຫ້ຄົນເຊົ່າ ດັດແປງຮູບຮ່າງ ***ທີ່ສົມເຫດສົມຜົນ*** ໂດຍທີ່ ຜູ້ເຊົ່າອອກຄ່າໃຊ້ຈ່າຍເອງ ເພື່ອຜູ້ເຊົ່າຈະໄດ້ຊົມໃຊ້ອາຄານຢ່າງເຕັມເມັດເຕັມໜ່ວຍ. ເຮືອນຊຶ່ງໄດ້ຮັບທຶນຂອງສາທາຣະນະ, ເຈົ້າຂອງເຮືອນ ອາດຈຳເປັນຕ້ອງຈ່າຍເອງ.

- **ການໃຫ້ຄວາມສະດວກທີ່ສົມເຫດສົມຜົນ ດ້ານກົດລະບຽບ, ນະໂຍບາຍ, ການປະຕິບັດ, ຫຼືການບໍລິການຕ່າງໆ.** ຜູ້ເຊົ່າອາດຂໍຮ້ອງໃຫ້ມີການ ໃຫ້ຄວາມສະດວກ ຖ້າຈຳເປັນເນື່ອງຈາກຄວາມພິການ ***ແລະ*** ກໍເປັນການຈຳເປັນ ເພື່ອໃຫ້ໂອກາດອັນເທົ່າທຽມກັນ ແກ່ຄົນຜູ້ນັ້ນຊົມໃຊ້ ແລະພໍໃຈກັບເຮືອນທີ່ຢູ່. ເຈົ້າຂອງເຮືອນຈະຕ້ອງ ອະນຸມັດຄຳຂໍຮ້ອງດັ່ງກ່າວ ເວັ້ນເສັຽແຕ່ການທຳເຊັ່ນນັ້ນ ຈະກໍ່ໃຫ້ເກີດພາລະທີ່ບໍ່ສາມາດ ແບກຫາບໄດ້ ຫຼືເຮັດໃຫ້ກິຈການປ່ຽນແປງຢ່າງຊິ້ນເຊີງ.

ໃຫ້ໂທຫາ ຄະນະກັມມາທິການດູແລ ການເອົາເຮືອນຢູ່ທີ່ຍຸຕິທັມ ຂອງຣັດອໍຣິກອນ ທີ່ເບີໂທ **(Fair Housing Council of Oregon)**
**503-223-8197** ຫຼື **1-800-424-3247** ເພື່ອເອົາຂໍ້ມູນເພີ່ມເຕີມ.

ຈົ່ງຈຳໄວ້ວ່າ ກົດໝາຍວ່າດ້ວຍ ການເອົາເຮືອນຢູ່ທີ່ຍຸຕິທັມ ບັງປົກປ້ອງທ່ານຈາກການຈຳແນກ ອີງໃສ່ເຊື້ອຊາດ, ຜິວພັນ, ສັນຊາດດັ້ງເດີມ, ສາສນາ, ເພດ, ຖານະດ້ານການມີຄອບຄົວ, ແຫຼ່ງມາຂອງຣາຍໄດ້, ແລະມີເດັກນ້ອຍຢູ່ໃນເຮືອນ.

FAIR HOUSING COUNCIL of Oregon

**1020 SW Taylor Street, Suite 700 Portland, Oregon 97205-2512**
**ເລກໂທ: 503-223-8197 ຫຼື 1-800-424-3247 (ຄົນຫູໜວກ/TTY)**
**Web: http://www.fhco.org ທາງອີເມລ: information@fhco.org**
**ສາຍໂທດ່ວນສຳຫຼັບການຮ້ອງຮຽນ ຂອງ HUD: 1-800-877-0246**